# ທໍຣະພີ ຂ້າແມ່ຕີພໍ່ ຂ້າລູກຕີເມັຽ ເສັຽທັງປະເທດ

ຄຸນຂອງພໍ່ທໍ່ພູເຂົາກ້າ-ຄຸນຂອງແມ່ທໍ່ຟ້າ ແລະແຜ່ນດິນຄົນເຮົາເກີດມາ ບໍ່ຮູ້ບຸນຄຸນພໍ່ແມ່ຄູບາອາຈານຄຸນພຣະຄຸນເຈົ້າຄຸນເຖົ້າຄຸນແກ່ຄຸນພໍ່ຄຸນແມ່ຄຸນຍາດ ຕີພີ່ນ້ອງຄົນຜູ້ນັ້ນແມ່ນແມ່ນອນບໍ່ສົມເປັນຄົນ ສົມຄວນເປັນໂຕສັດເຄິ່ງບົກໂຕສັດ ເຄິ່ງນ້ຳຫຼືວ່າສົມເປັນນັກທໍຣະພີປ່ວຍຍາບຊ້າກໍ່ວ່າໄດ້ (ທໍຣະພີລາວມີຫຼາຽຄົນແລະ ແຕ່ຣະຄົນນັ້ນແມ່ນລວັນແລ້ວແຕ່ເປັນຄົນຂ້າແມ່ຕີພໍ່ຂ້າລູກຕີເມັຽແບບສັດເດັຽ ຣະສານບໍ່ມີຜິດ ຫຼື ອຸປນີໃສ ນີ້ແມ່ນຄຳຖາມຈາກ ບກ ທີ່ຝາກມາຍັງທ່ານຜູ້ອານທັງ ຫຼາຽແລະມວນຊົນຕ່າງໆພ້ອມທັງນັກການເມືອງທຸກໆທ່ານໃຫ້ຊ່ອຍຄິດນຳ ກັນຄວາມຈິງແລ້ວຖ້າວ່າພໍ່ຮ້າຽລູກຕີລູກນັ້ນບໍ່ເປັນຫຍັງເພາະວ່າພໍ່ຕ້ອງການຢາກ ໃຫ້ລູກຂອງຕົນເປັນຄົນຮູ້ຜູ້ດີບໍ່ຢາກໃຫ້ລູກຊົ່ວບໍ່ຢາກໃຫ້ລູກເປັນໂຈນຮ້າຽລ້າຽຂະ ໂມຍແລະບໍ່ຢາກໃຫ້ລູກເປັນຄົນຂາຽຊາຕຄືທ້ວຄຳໄຕທ້ວໝູຮັກເຈົ້າສຸພານຸວົງທ້ວ ພູມີແລະຄະນະພັຄພວກຂີ້ຫູດສາມານຂອງເຂົາ ຄືພວກຄະນະພັຄຣັຖແຕ່ຣະຄົນ ພວກນີ້ໄດ້ພາກັນຮຽນຈົບປະຣິນຍາເອກຝ່າຍວິຊາຍອດທໍຣະພີເພາະວ່າຂ້າ ໄປໝົດທຸກຄົນບໍ່ເລືອກໜ້າເລືອກຕາ ທະແນມແຕ່ວ່າຜູ້ໃດຂັດນະໂຍບາຍຂອງ ພວກເຂົາອັນນີ້ແມ່ນທໍຣະພີປະເພດນຶ່ງຄືທໍຣະພີຜເດັດການຊ້າຽຈັດທຸກໆທໍ ຣະພີບໍ່ດີຈັກຢ່າງເພາະວ່າມັນຝືນຕໍ່ກົດເກນການເປັນມະນຸສ ດົນນານມາແລ້ວ ຍັງມີເຣື້ອງໄດ້ເລົ່າຕໍ່ປາກກັນມາ ຈົ່ນມາຮອດທຸກວັນນີ້ກ່ຽວກັບເຣື້ອງໂສກເສົ້າ ເຣື້ອງນຶ່ງ ອັນທີ່ມີຊື່ວ່າ (ຕີບເຂົ້ານ້ອຍຂ້າແມ່ຕາຍ)ອັນນີ້ເປັນເຣື້ອງຈິງ ບັກທອງ ຂ້າແມ່ ເພາະວ່າແມ່ຂອງເຂົາໄປສົ່ງເຂົ້າບໍ່ທັນແລະກໍ່ຖືເອົາກ່ອງເຂົ້ານ້ອຍ ໄປນຳ ໃນຣະດູເຮັດນາຣະດູນຶ່ງທີ່ຫຼາຽຟ້າຫລ້າປີມາແລ້ວ ຢູ່ທີ່ທົ່ງນາແຫ່ງນຶ່ງໃນ ຊານເມືອງເລີງນົກທາ ແຂວງຍະໂສທອນພາຄອີ່ສານຄືທີ່ຄົນລາວສອງຝັ່ງຂອງ ໄດ້ຊາບກັນດີ ໃນທໍຣະພີເຣື້ອງນີ້ ຄົນລາວສ່ວນຫຼາຽແລ້ວແມ່ນຮູ້ດີເຣື້ອງໂສກເສົ້າ ລູກຊາຍຂ້າແມ່ເຣື້ອງນີ້ນັບຕັ້ງແຕ່ມື້ເກີດເຫດໃນວັນນັ້ນມາຮອດມື້ນີ້ ຊາວຍະໂສ ທອນທີ່ຍັງເອີ້ນຕົນເອງວ່າຊາວລາວອີ່ສານໄດ້ສ້າງທາດສາມແມ່ລູກນັ້ນໄວ້ຢູ່ກະ ໂຕທົ່ງນາ ທີ່ມີເຫດເກີດຂຶ້ນນັ້ນ ສ່ວນທາດໃຫ່ຽແມ່ນທາດຂອງແມ່ປ້າທອງ

ທາດນ້ອຍແມ່ນທາດຂອງຍາພໍ່ລູງທອງແລະທາດທີ່ເປັນຮູປອຸໂມງນັ້ນແມ່ນທາດ
ບັກທອງ ບັກທໍຣະພີນັ້ນເອງ ອັນນີ້ນັ້ນເພີ່ນເຮັດໄວ້ເພື່ອເຕືອນຈິດເຕືອນໃຈຂອງ
ຄົນລາວທີ່ເກີດມາພາຽຊ້ອຽ ເພື່ອບໍ່ຢາກໃຫ້ເຮັດແບບບັກທອງນັ້ນອີກຈັກເທື່ອແຕ່
ປ່ານນັ້ນຫຼາຽຝ້າຫຼາຽປີຕໍ່ມາ ຍັງມີຊາຍຄົນນຶ່ງຊື່ວ່າທ້າວຈຳນຽລເປັນຄົນພາຄອີ
ສານຄືຄົນຮ້ອຍເອັດແລະຄອບຄົວໄດ້ຍ້າຽໄປຢູ່ຫຼາຽເມືອງໃນທີ່ສຸດບໍ່ມີທາງໄປທ້າວ
ຈຳນຽລກໍ່ໄດ້ອີເລີເປີເສີໄປເປັນໂຈນຮັບໄຊ້ວຽດນາມ ຢູ່ສອງແຂວງຜົ້ງສາລີ ຫົວ
ພັນ ບ່ອນໂຈນປຸ້ນຊາຕເຕົ້າໂຮມກັນໃນທົສວັຕປີ-1950-ແລະປີ-1960-ທ້າວ
ຈຳນຽລຫົວໜ້າໂຈນລັກງົວ ລັກຄວາຍຂອງແມ່ປ້າອ່ງຄຳ ບຸຕສະດີຍະວະເທັນ
ແມ່ນເປັນແມ່ອາຂອງຈຳນຽລໄດ້ມີມື້ນຶ່ງແມ່ອາໄດ້ບອກຫຼານຂອງຕົນໃຫ້ເຊົາເປັນ
ອ້າຍຂະໂມຍຈຳນຽລໃຈຮ້າຍວູ່ວີ່ຂື້ນມາແລະໄດ້ດາກເອົາໄມ້ຄັນຫລາວຫາບເຂົ້າ
ອຸດໃສ່ແມ່ອາອ່ງຄຳຜູ້ທີ່ຢືນຝັດເຂົ້າຢູ່ນັ້ນຈົ່ນວ່ານົມທັງສອງກ້ຳຂາດທັນທີແມ່ປ້າ
ບຸຕສະດີຍະວະເທັນໄດ້ເສັຽຊີວິຕໃນມື້ຕໍ່ມາ ເພາະວ່າເລືອດລົງບໍ່ມີຢາຂັດເລືອດ
ເຣື້ອງແມ່ປ້າອ່ງຄຳນົມຂາດຍ້ອນຫຼານອັບປີທໍຣະພີ ໄດ້ຊ່າລືກັນທົ່ວຮ້ອຍເອັດ-
ກຳແພງເພັຊ ໄດ້ປະກາດຈັບຈຳນຽລຫຼືວ່າ ເສືອອັ້ນ ມີຊື່ຢູ່ໃນຂບວນໂຈນລັກງົວ
ຄວາຍໃນເຂຕພາກກາງອີສານເສືອອັ້ນນີ້ບໍ່ມີບ່ອນຢູ່ຈຶ່ງໄດ້ເຊໄປຫາຊຸ້ນປີກໂຈນ
ປຸ້ນຊາຕລາວແດງຂອງສຸພານຸວົງແລ້ວສຸພານຸວົງຂື້ນຊັ້ນໃຫ້ເປັນນາຍພົລຈຳນຽລ
ຢູ່ໃນຖ້ານກາງສົງຄາມໃນລາວຈຳນຽລໄດ້ຂ້າພີ່ນ້ອງໄທດຳຫຼາຽ-ພີ່ນ້ອງມົ້ງ-ພີ່
ນ້ອງມຽ້ນ-ພີ່ນ້ອງມູເຊີແລະພີ່ນ້ອງໄທຍຜູ້ນ້ອຍຜູ້ທີ່ເຂົາເຈົ້າບໍ່ຍອມກົ້ມຫົວເປັນຂີ້
ຂ້ານ້າໄຊ້ໂຈນລາວແດງເມື່ອປີ-1953-ຫາ ປີ-1965- ໃນຄັ້ງນຶ່ງຢູ່ໃນກະໂຕ
ພາຄໄຕ້ຂອງລາວ ມີສະຫາຽອະກະຕັນຍູບັກນຶ່ງຄືຜູ້ທີ່ມີຊື່ວ່າບັກທໍຣະພີສີປະເສີດ
ໄດ້ສັ່ງຂ້າພຣະອາຈານຊາຄຳແດງໃນຄະນະທີ່ໝໍພູນສີປະເສີດໄດ້ທໍຣະມານພຣະ
ອາຈານຊາຄຳແດງຢູ່ນັ້ນພູນສີປະເສີດໄດ້ເນືອດຝາມືອັດກະແຕ້ຫູພຣະອາຈານ
ຊາຄຳແດງຕັ້ງວ່າຫຼາຽຄັ້ງກ່ອນຍັງບໍ່ທັນໄດ້ສັງຫານເພີ່ນ ເຣື້ອງໂຈນທໍຣະພີ ພູນ
ສີປະເສີດນີ້ ມັນໄດ້ຂ້າພຼະອາຈານຊາຄຳແດງນັ້ນແມ່ນຄົນລາວເຮົາຈຳໄດ້ດີຈົ່ນ
ຮອດທຸກວັນນີ້ ໃນຄະນະດຽວກັນນັ້ນໄດ້ມີສະຫາຽຈູມມາລີໄຊຍະສອນໄດ້ເກີດ

ເລືອດບຈ້ຂື້ນແລະໄດ້ສັ່ງໃຫ້ລູກນອ້ງຂອງຕົນໄປຈັບເອົາພຣະອາຈານບຸນມາກ
ວັດອາໝາດຈຳປາສັກເພື່ອເອົາມາຕັດຫົວແລ້ວມັນນຳເອົາຫົວຂອງພຣະອານ
ຈານບຸນມາກໄປບວງສວງຜີມາກ ເລນິນອີພໍ່ຂອງມັນ ຄົນລາວເຂດແຂວງຈຳ
ປາສັກຈົດຈຳເຣື້ອງນີ້ໄດ້ດີພໍສົມຄວນ ເຣື້ອງຈູມມາລີທີ່ຕັດຫົວພຣະອາຈານບຸນ
ມາກເຣື້ອງນີ້ຈະປິດບັງຄົນລາວບໍ່ໄດ້ອີກແລ້ວໃຜໆກໍ່ຮູ້ໝົດກັນທັງນັ້ນ ມີ ອີກໃນ
ແຂວງຄຳມວ່ນ ຍັງມີຊາຍສະກັນຄົນນຶ່ງຊື່ວ່າທໍຣະຣາຊ ຄົນທໍຣະພີສິງກະໂປ
ສີໂຄດຈຸລມະນີ ໄດ້ສັ່ງໃຫ້ລູກນອ້ງຂອງຕົນໄປຍິງຍາທ່ານໂງ່ນຢູ່ທີ່ກະໂຕວັດ
ບຈ້ານເຫຼົ່າປາກຊັນ ແຂວງບໍຣິຄັນ ອັນນີ້ຄົນປາກຊັນຈຳໄດ້ເຣື້ອງສິງກະໂປຂຈ້າ
ຍາທ່ານໂງ່ນໄດ້ດີເພາະວ່າໃນເວລາຊອມໃຈການຕາຍຂອງສິງກະໂປນັ້ນ ສິງ
ກະໂປໄດ້ອອກປາກຮັບສາຣະພາບເອງວ່າຕົນເປັນຜູ້ໄດ້ອອກແຜນການລອບສັງ
ຫານຍາທ່ານໂງ່ນ ສ່ວນຍາທ່ານໂງ່ນເປັນພຣະອົງທີ່ສັດຊື່ບໍຣິສຸທຕໍ່ອອກຕົນຍາດ
ຍົມແລະຮັກສາສິນຮັກສາທັມ ໂດຍແທ້ ໃນເວລາອີກຄັ້ງນຶ່ງຫຼາຍປີມາແລ້ວຍັງມີ
ຄົນຂີ້ທູດສາມານທໍຣະພີຄົນນຶ່ງ ຊື່ວ່າບັກຈັນມີ ດວງບຸດດີ ຈັນມີຕອນເປັນອຈ້າຍ
ບຈ່ວແວງເປັນບຈ່ວຂື້ນໃໝ່ນັ້ນໄດ້ເອົາໄມ້ຄານຟອຍຟາດໃສ່ງອ່ນຕໍ່ຂອງແມ່ເຖົ້າ
ແມ່ເຖົ້າຄົນນັ້ນເປັນແມ່ແມ່ ຂອງມັນເອງລາວໄດ້ຖືກໄມ້ກຈ້ານຟອຍຈົ່ນວ່າດີ້ນ
ແດ່ວໆ ຕາຍຊັກເຂົ້າແວບໆຈົ່ນຕາເລືອກຕາຊັ້ນໄປ ໃນມື້ເກີດເຫດຂື້ນນັ້ນແມ່ນ
ໂດຍບັງເອີນແທ້ໆເພາະວ່າທ່ານຍາພໍ່ຕາແສງອ່າງແລະທ່ານຍາພໍ່ຕາແສງທອນ
ສີຫາຣາຊເປັນຄົນຊາວເມືອງທຸຣະຄົມ ໄດ້ໄປຄົ່ວເບື້ອເລາະແມ່ນ້ຳງື່ມ ທັງສອງ
ທ່ານນັ້ນໄດ້ຍິນໄທບຈ້ານໃກ້ຄຽງຮອ້ງໃຫ້ແຊວໆຢູ່ແລ້ວທັງສອງໆ່ານໄດ້ແລ່ນໄປ
ເບິ່ງພໍເມື່ອມາເຖິງບຈ້ານຄົນດັ່ງກ່າວນັ້ນກໍ່ເລີຍເຫັນແມ່ປຈ້ປານີນອນຊັ່ງອັບໆຢູ່
ຕາແສງອ່າງກໍ່ເລີຍເອົານ້ຳມັນເຍືອງທີ່ທ່ານເຄີຍຖືຕິດຕົວໄປເປັນປະຈຳນັ້ນ ໄປ
ນວດໄປຄັ້ນໃຫ້ແມ່ປຈ້ປານີຈົ່ນແມ່ປຈ້ປານີຮູ້ເມື່ອຄວາມຄົນແຕ່ນັ້ນມາ ເຣື່ອງຂອງ
ເຣື້ອງນີ້ກໍເລົ່າຕໍ່ປາກກັນມາຈົ່ນເທົ້າທຸກວັນນີ້ ເຣື້ອງຂອງຈັນມີຕິແມ່ເຖົ້ານີ້ມັນຊິ່
ໄປປິດບັງຄົນລາວພາຄກາງບໍ່ໄດ້ດອກເພາະວ່າຄົນນ້ຳງື່ມຄົນລອງວຽບຄົນລອງ
ຊັນແລະຄົນລອງເທີນ ຍັງບໍ່ໄດ້ຕາຍດັບເບີດເທື່ອແລະຜູ້ທີ່ຈຳໄດ້ດີກໍ່ຍັງມີຫຼາຍຄົນ

ພໍສົມຄວນຢູ່ຈັນນີ ບໍ່ມີບອ່ນໄປຈຶ່ງໄດ້ໄປຮ່ວມຂບວນການຂາຽຊາຕ ແລະທໍາລາຽ
ຊາຕນໍາສຸພານຸວົງ-ໄກສອນ ຈົ່ນໄດ້ເປັນຮອດຄະນະກັມ ມະການສູນກາງພັຄປະ
ຊາຊົນປະຕິວັຕຂາຽຊາຕລາວ ຍອ້ນວ່າຂ້າປະຊາຊົນລາວຫຼາຽໄດ້ດີໃນພາຄກາງ

ເມື່ອເອີ່ຍຊື່ຂອງທ້າວປະດິສ ທ່ຽງທັນຂື້ນມາຍາມໄດຄົນລາວສອງຟັງຂອງຮູ້ຄົນ
ຊື່ນີ້ດີທີ່ສຸດ ໂດຍສະເພາະແລ້ວແມ່ນຄົນອຸບົລຄົນກາຣະສິນ-ຄົນຍະໂສທອນ-ຄົນອຸ
ດອນ-ຄົນຂອນແກ່ນ ແຕ່ສວ່ນວ່າຄົນຝ່ຍກໍ້າວຽງຈັນພຸ້ນ ແຮ່ງຮູ້ດີກອ່ວກັບຄວາມ
ອິ້ທູດສານານຂອງປະດິສຄົນນີ້ ຊື່ແທ້ຂອງປະດິສ ແມ່ນທ້າວສົມບູຣ ຫລັງຈາກ
ເຕະພໍ່ລູງນອ້ຍ ເຮືອງສິທ(ອ້າຍຂອງພໍ່ຂອງມັນ)ແລ້ວມັນໄດ້ໄປປ່ຽນຊື່ຂອງຕົນ
ມາເປັນຊື່ທ່າວປະດິສ ທ່ຽງທັນ ເພື່ອບໍ່ໃຫ້ຄົນຮູ້ຈັກຄົນຊື່ທ້າວສົມບູຣ ເຮືອງສິທ
ເພາະສັງຄົມລັງກຽດບັກທໍຣະພີປະດິສຜູ້ນີ້ ໄດ້ເຕະພໍ່ລູງຂອງຕົນເອງຈົ່ນວ່າເພວ
ແພ່ພະຄະວາໄປ ໂດຍຫາເຣື້ອງທາຣາວ ໃສ່ພໍ່ລູງຂອງຕົນເອງເປັນໃສ້ເສິກໃຫ້
ບາງກອກ ທັ້ງໆ ທີ່ວ່າຍາພໍ່ລູງນອ້ຍເປັນຜູ້ອຸປຖັມສະເດັດເຈົ້າເພັຊຣາຊ ໃນຄາວ
ເພີ່ນອອກຕໍ່ສູ້ຝຣັ່ງເສສນັ້ນ ຍັງມີອີກຊາຍວຽງຈັນຄົນນຶ່ງ ຊື່ວ່າທ້າວບຸຕສະບົງ
ສຸວັນນະວົງ ດຽວນີ້ຄົນວຽງຈັນຊໍ້າພັດໃສ່ຊື່ໃຫ້ໃໝ່ວ່າ ບັກໝ້າໝາທໍຣະພີບຸດສະ
ບົງ ທ້າວບຸດສະບົງຕອນບໍ່ທັນໄດ້ພົບພູມີ-ໄກສອນ ແລະຄະນະປະເທດລາວເປັນ
ຄົນຮູ້ຜູ້ດີເປັນຄົນຮັກພໍ່ຮັກແມ່ຮັກພີ່ຮັກນອ້ງ ສິບບ້ານຊ່າຫ້າບ້ານລືແຕ່ວ່າຝ້າປ່ຽນ
ສີບຸດສະບົງຕອນເຂົ້າໄປຮ່ວມຂບວນການແນວລາວຮັກຊາຕນັ້ນຖືກອີ່ຕານາໄຂ
ຄໍາພີທູລແລະອີກອີ່ຕາຈະເຣີນ ພວງຈັນ ລ້າງສມອງຈົ່ນວ່າເດງປານໝາກອິ
ທ້າວບຸດສະບົງຈົ່ນລືມຮອດພໍ່ລືມຮອດແມ່ລືມຮອດພີ່ລືມຮອດນອ້ງປອ້ງປາຍເພາະ
ວ່າບຸດສະບົງເມົາການປະຕິວັຕແຮງ ຈົ່ນວ່າກາຍໄປເປັນນັກທໍຣະພີເອກວຽງຈັນ
ທ້ານບົງ ສຸວັນນະວົງ ໄດ້ແລ່ນຕອ້ນຮັບລູກຊາຍຂອງຕົນໃນວັນທີ-12-ສິງຫາປີ-
1975-ດວ້ຽຄວາມພໍໃຈໃນຖານະພໍ່ລູກທີ່ບໍ່ໄດ້ພົບກັນດົນນານແລ້ວແລະໄດ້ມີການ
ກິນລຽ້ງຢ່າງຄຶກຄື້ນມະໂຫຣານ ບາດແລ້ວບໍ່ພໍທໍ່ໄດເດືອນທ້າວບຸດສະບົງຜູ້ບ້າ
ອໍານາຈໄດ້ສັ່ງໃຫ້ທະຫານໃກ້ຊິດຂອງຕົນໄປລາກເອົາຄໍພໍ່ຂອງຕົນເອງໄປເຂົ້າຄຸກ
ແລະໄດ້ສົ່ງໄປຂ້າທໍຣະມານຈອ່ງອຶດຈອ່ງຢາກຢູ່ສູນສັພທຸກໃນເຂດປົດປອ່ຽເກົ່າ

ໃນທີ່ສຸດພະນະທ່ານບົງ ກໍ່ໄດ້ເສັຽຊີວິຕຍອັນນ້ຳມືຂອງບຸຕຊາຍຂອງຕົນເອງ ໃນເຣື້ອງບຸດສະບົງຂ້າພໍ່ນີ້ ຊິ່ໄປປິດບັງຄົນວຽງຈັນບໍ່ໄດ້ອີກແລ້ວ ດຽວນີ້ບຸດສະບົງເລີຍກາຽເປັນມະຫາທໍຣະພີຂ້າພໍ່ ບຸດສະບົງບາບພໍ່ເລີຍກາຽມາເປັນຄົນຕົກລົ່ນຕ່ຳກວ່າປະຊາຊົນ ຈົ່ນວ່າບໍ່ໄດ້ເປັນຣອດຫຍັງໃນປະຈຸບັນນີ້ ພໍໄດ້ເປັນພຽງແຕ່ໝາເຝົ້າປະຕູບ້ານແລະຕົນຕົວເຕັມໄປດ້ວຍໝັດເມັນແລະຂີ້ກາກຂີ້ທິດຂີ້ເຮື້ອນແຕ່ວ່າໂຕສັຕຫຼາຽສນິດມັນຍັງຮັກລູກຂອງພວກມັນ ສ່ວນໂຕສັຕບາງສນິດມັນບໍ່ຂ້າລູກຂອງມັນ ບາດວ່າເຈົ້າແດງສຸພາວຸວົງແມ່ນວ່າຕ່ຳກວ່າສັຕເດັຽຣະສານ ເພາະວ່າອີຕາສຸພານຸວົງໄດ້ລາກເອົາຄໍລູກຊາຍຂອງຕົນນັ້ນຄືເຈົ້າອາຣິຍະຜູ້ເປັນລູກເອົາໄປຂ້າບວ່ງສວງພວກຜີມານມາກເລນິນຍັງບໍ່ແລ້ວແຕ່ທໍ່ນັ້ນອີຕາສຸພານຸວົງນີ້ຍັງໄດ້ລາກເອົາຄໍພີ່ນ້ອງຂອງຕົນ ຄືພຣະເຈົ້າຊີວິດລາວແລະຄອບຄົວຂອງເພິ່ນໄປຂ້າຖິ້ມຢູ່ສູນສັພທຸກທີ່ແຂວງຫົວພັນຍັງບໍ່ແລ້ວທໍ່ນັ້ນສຸພານຸວົງຍັງໄດ້ດາກເອົາຄໍປະຊາຊົນລາວຜູ້ທີ່ເຄີຍສນັບສນູນການປະຕິວັດໄປຂ້າຖິ້ມນຳອີກດ້ວຽ ໃນເຣື້ອງນີ້ຄົນລາວກໍ່ຍັງບໍ່ທັນລືມຕໍເຣື້ອງອີຕາສຸພານຸວົງຫລົງເປັນບ້ານຳເມັຽເຜົາສຸພານຸວົງແລ້ວເປັນໂຕຕັ້ງໂຕຕີທີ່ສັ່ງຂ້າພຣະເຈົ້າຊີວິຕ ອັນນີ້ຣະເປັນເຈົ້າທໍຣະພີ ສີແດງແທ້ໆກໍ່ແມ່ນສຸພານຸວົງນີ້ແລ້ວ ຍັງມີໃນວາຣະຄັ້ງນຶ່ງກ່ອນປີ-1970-ນັ້ນຍັງມີນາຍທະຫານຊາຍສະກັນຢູ່ແຂວງຄຳມ່ວນຄົນນຶ່ງຊື່ວ່າໂກໂລເນນທັສດີສິນໄຊ ຜູ້ທີ່ມີອຳນາດເຕັມຢູ່ໃນກອງທັບ ພຣະຣາຊອານາຈັກລາວ ຄົນຄຳມ່ວນແລະຄົນບໍຣິຄັນໃຜໆກໍ່ໄດ້ນັບຖືໜ້ານັບຖືຕາພັນເອກທັສດີ ຍັງມີຄັ້ງນຶ່ງຍາພໍ່ລູງຄຳມີ ຜູ້ທີ່ເປັນບິດາຂອງໂກໂລເນລທັສດີ ໄດ້ຕັ້ງໃຈໄປຢາມລູກຜູ້ເປັນຫົວເຫ້ົາຫົວເພາວນຢູ່ທີ່ກະໂຕເມືອງທ່າແຂກ ສ່ວນຍາພໍ່ລູງຄຳມີເປັນຜູ້ເຖົ້າພື້ນເມືອງລາວເພາະວ່າການແຕ່ງຕົວຂອງເພິ່ນກໍ່ໄດ້ແຕ່ງແບບບູຮານ ຕາມປະເພນີອັນດີງາມຂອງຜູ້ເຖົ້າແຂວງຄຳມ່ວນ ຍາພໍ່ລູງຄຳມີຜູ້ທີ່ຢາກເຫັນໜ້າລູກຊາຍຂອງຕົນ ຕິດຍົສນາຍພັນເອກອອກມາຕອ້ນຮັບຢ່າງດີ ຍາພໍ່ລູງກໍ່ດີໃຈຈົ່ນວ່າສະອື້ນແລະກໍ່ໄດ້ເວົ້າຂຶ້ນໝົດແຮງ ຕາມພາສາຄົນດີໃຈສ່ວນຍາພໍ່ລູງຄຳມີ ບໍ່ໄດ້ນຶກບໍ່ໄດ້ຝັນດອກວ່າລູກຊາຍຂອງຕົນຈະຖືຊາ ຄຳເວົ້າຂອງຕົນເພາະວ່າຍາພໍ່ລູງຄຳມີກໍ່ເຄີຍໄດ້ເວົ້າຢອກເວົ້າຕລົກເວົ້ານົວຫົວມ່ວນນຳລູ

ຕາມປະເພນີຜູ້ເຖົ້າຊາວບ້ານເຮົາ ຍາພໍ່ລູງຄຳມີທັງເວົ້ານຳລູກ ທັງຢືນບີໝາກກ້ວຍ
ຕົບໃຫ້ລູກຊາຍພໍ່ລູງຄຳມີໄດ້ເວົ້າວ່າ ລູກເຮີຍເຈົ້າຢ່າເປັນຄົນໃຈໂຫດຮ້າຍຫຼາຍ
ແລະຢ່າຂ້າຄົນຂ້າທະຫານຂອງຕົນເອງມັນບໍ່ຄ່ອຍຈະດີແລະຢ່າເຕະລູກເຕະເມັຍ
ຂອງຕົນກໍ່ບໍ່ຄ່ອຍວ່າຄັກປານໃດພໍ່ຂໍໃຫ້ລູກເຊົາສາກະທຳແບບໃຈມານໃຈຮ້າຍ
ຕໍ່ມະນຸດດ້ວຍກັນ ໂກໂລເນລທັສດີ ຄົນນີ້ຜູ້ຢາກໂຊຄວາມໜຸ່ມແໜ້ນແລະຢາກໂຊ
ຄວາມກ້າຫານຊານໄຊຂອງຕົນກໍ່ ໂດດເຕະພໍ່ຂອງຕົນເອງຮ້າຍກວ່າອ້າຍໜຸ່ມ
ມັດເມົາຜູ້ໜຸ່ມເຕະຜູ້ເຖົ້າຜູ້ເຖົ້າກໍ່ໄດ້ຫົວປັກລົ້ມກິ່ນລົງປ່ຽງວ່າງທັນທີຈິ່ນລອດຕາຍ
ວຸດວິດເພາະຖືກໝັດຊ້າຍໝັດຂວາຂອງລູກຊາຍທໍຣະພີຫລັງຈາກຖືກຕີນລູກຊາຍ
ຂອງຕົນແລ້ວພໍ່ລູງຄຳມີໄດ້ໝັ່ງນົບປັບແປບແລະໄດ້ຍໍມືນົບໃສ່ຫົວແລ້ວກໍ່ຮອ້ງໃສ່
ເທວະບຸດເທວະດາພຣະອິນ ຂໍໃຫ້ລູກຊາຍທໍຣະພີຂອງຕົນຕົກໝົ້ນາຣົກອາວິຈີທັງ
ເປັນເຖິ້ນສວ່ນແມ່ເຖົ້າກາຜູ້ເປັນພັລຍາຂອງພໍ່ເຖົ້າຄຳມີກໍ່ຄືແມ່ຂອງທໍຣະພີ ທັສດີ
ນັ້ນເອງຣາວກໍ່ໄດ້ນົບໃຫ້ວພຣະອິນພຣະພົມຄືກັນແລ້ວຣາວກໍ່ອະທິຖານບໍ່ໃຫ້ລູກ
ທໍຣະພີ ເນຣະຄຸນຂອງຕົນໄດ້ພົບກັບຄວາມສຸກໃນຊາຕນີ້ແລະໃນຊາຕຊິ່ມາພາຍໜ້າ
ຍາພໍ່ລູງຄຳມີແລະຍາແມ່ປ້າກາທັງສອງຜົວເມັຍກໍ່ໄດ້ຕັດຂາດກັບທັສດີຕັ້ງແຕ່ວັນ
ນັ້ນມາ ຈົ່ນຮອດທັງສອງເຖົ້າໄດ້ເຖິງແກ່ກັມ -ນັບຕັ້ງແຕ່ມື້ນັ້ນມາ ເຣື່ອງໂກໂລ
ເນລທັສດີເຕະພໍ່ຂ້າທະຫານກັກເດີກໍຂອງຕົນມັນໄດ້ຝັງຢູ່ໃນໝາກຫົວໃຈຂອງຄົນ
ຄຳມ່ວນ ບໍຣິຄັນ ແລະນາຍທະຫານກອງທັບພຣະຣາຊອານາຈັກລາວແຕ່ນັ້ນມາ
ຊີວິດຂອງພັນເອກທັສດີກໍ່ແລ່ນລົງຄ້ອຍວັບໆ ເພາະວ່າຊັ້ນນາຍພົລຈັຕວາ ທີ່ຈະໄດ້
ມອບໃຫ້ພັນເອກທັສດີນັ້ນ ໂດຍພຣະເຈົ້າຊີວິຕລາວແມ່ນເລີຍໄປມອບໃຫ້ພັນເອກ
ສູຣິທ  ໂດນສະໂສຣິທຊຸດຕໍ່ມາແທນທີ່ພຣະເຈົ້າຊີວິຕຈະມອບນາຍພົລໃຫ້ພັນເອກ
ທັສດີ ແຕ່ວ່າພຣະເຈົ້າຊີວິຕຊ້ຳພັດໄດ້ປ່ຽນໃຈອີກແລະໄດ້ມອບຊັ້ນນາຍພົລໃຫ້ພັນ
ເອກທອງຣິທ ໂຈກເບັງບຸນຊຸດສຸດທ້າຍແທນທີ່ພັນເອກທັສດີໄດ້ຊັ້ນນາຍພົລແຕ່
ວ່າພຣະເຈົ້າຊີວິຕ ໄດ້ປ່ຽນໃຈອີກເລີຍໄດ້ໄປມອບຊັ້ນນາຍພົລໃຫ້ພັນເອກອາດຣາສ
ພັງທອງປະຖັມມະວົງອັນນີ້ທຣະ -ບູຣານເພີ່ນວ່າໃຈໂນ ໂຫນີ້ພາໂຕຕົກຕ່ຳພໍມາຮອດ
ປີ-2005-ຫາ-2006 -ນັ້ນຄືດວ່າບັນດານັກທໍຣະພີລາວໄດ້ດັບສູນໄປໝົດແລ້ວ

ຈາກສັງຄົມແຕ່ວ່າຊ້ຳພັດຍັງມີອີກນັກທໍຣະພີລາວໃຫ່ຽຄົນນຶ່ງຊື່ວ່າຖຸນອມສຣີ
ອະນຸໂຊກເປັນທໍຣະພີລາວສອງຝັ່ງຂອງຄົນນີ້ແຮ່ງໄປກັນໃຫ່ຽມັນບໍ່ຈັກຫຍັງທັງ
ໝົດຈົ່ນຮອດກະທັ້ງຕົວມັນເອງມັນກໍ່ບໍ່ຮູ້ອີກນອກຈາກວ່າມັນເອງບໍ່ຮູ້ມັນແລ້ວ
ມັນຍັງຂຽນບົດຍາວຢຽດດາການຈັດຕັ້ງຂອງພໍ່ມັນອີກນັ້ນກໍ່ຄືການຈັດຕັ້ງລາວ
ເສຣີຊົນຫຼືວ່າລາວຮ່ວມເສຣີພາບໃນມື້ນີ້ ພໍ່ ຂອງຖຸນອມ ໂຊກນອ້ຽມີນາມປາກ
ກາວ່າລູງບຸນສວນກຽຕ ໂງ່ງຊື່ງແມ່ນພັລເອກສວັຍ ສວັຍແສນຍາກອນເປັນຜູ້ໃສ່
ໃຫ້ເພາະວ່າທ່ານນາຍພົລສໄວຍປັ້ນຄອບຄົວຂອງພໍ່ຖຸນອມບໍ່ມີຄວາມປອດໄພ
ພໍ່ຂອງຖຸນອມ ໂຊກນອ້ຽໄດ້ປະກາດໄປທົ່ວຄະນະລາວເສຣີຊົນໃນປີ-1946-ບໍ່ໃຫ້
ໃສ່ຊື່ຂອງເພິ່ນແທ້ເພາະເພິ່ນຢ້ານທາງການໄທຍ໌ປາບປາມເພິ່ນເອງແລະຍາດ
ຕິພີ່ນອ້ງ ເຊື້ອຊາຕຕະກຸນຂອງເພິ່ນ ສະນັ້ນພວກເຮົາຂໍສງວນຊື່ແທ້ຂອງພໍ່ລູງ
ບຸນສວນກຽດ ໂງ້ງເຖິງທີ່ວ່າເພິ່ນໄດ້ໝົດບຸນໄປແລ້ວກໍ່ຕາມ ແຕ່ວ່າລູກເຕົ້າ ໝໍ່
ແໜງຂອງເພິ່ນກໍມີຊີວິດຊີວາຢູ່ໃນພາກອີສານ-ຄວາມຈິງແລ້ວ ພໍ່ຂອງຖຸນອມເປັນ
ຄົນຮັກຊາຕລາວ ໂດຽແທ້ແລະເພິ່ນຍັງມີຫົວຊາຕລາວນິຍົມສູງອີກ ພໍ່ລູງບຸນສວນ
ບໍ່ມີຈັກເທື່ອໃນຄຳວ່າຈົ່ມເມື່ອຍໃນດ້ານການເຮັດວຽກຕໍ່ສູ້ກູ້ຊາຕທ່ານຍາພໍ່ລູງ
ບຸນສວນກຽດ ໂງ້ງເປັນຄົນຮັກດຽວໃຈດຽວແລະເພິ່ນບໍ່ເປັນນົກຫຼາຽຄອນ ຄືກັນ
ກັບລູກຊາຍຂອງເພິ່ນຄືທ້າວທໍຣະພີຖຸນອມ ໂຊກນອ້ຽ ບຸນສວນກຽດ ໂງ້ງຖືກວ່າ
ແກວແລະປະຕິກຸລບາງກອກແມ່ນສັດຕູຂອງລາວ ໂດຍແທ້ ພໍ່ຂອງຖຸນອມ ໂຊກນອ້ຽ
ໄດ້ປະກາດຕໍ່ສູ້ແກວໄທຍ໌-ຝຣັ່ງເສສໃນວັນທີ-22-ທັນວາປີ-1948-ຢູ່ທີ່ບ້ານຄຳຕະ
ນາ ເມືອງໜອງຫານຈັງຫວັດອຸດອຣ ພໍ່ຂອງຖຸນອມ ໂຊກນອ້ຽ ທ່ານພັນເອກປີ່ນ ມຸທຸ
ກັນ ສົມເດັດພຣະສັງຄະຣາຊ ອວັນ ຕິດສະວັງ ໂສພັນ ໂທປະສາຣທອງພັກດີ ພັນເອກ
ພິເສສປະໄທ ທ້າວຄອງ ຈັນດາວົງແລະນາຍຄູທອງພັນ ສຸທທິມາສແລະຜູ້ອື່ນໆ
ໄດ້ຮັບພາຣະຢ່າງໜັກເພື່ອຄ້ຳຈູນລ້ຽງເຂົ້ານ້ຳຊັ້ນປາຄະນະກູ້ຊາຕລາວຕໍ່ຕ້ານ
ຝຣັ່ງ ຈາກຝັ່ງວຽງຈັນ ຜູ້ທີ່ເບີດເງິນເບີດຄຳຫຼາຍກວ່າຜູ້ອື່ນນັ້ນແມ່ນພໍ່ຂອງຖຸນອມ
ໂຊກນອ້ຽແລະທ່ານພົລເອກສໄວສໄວແສນຍາກອຣ ຜູ້ທີ່ເປັນອ້າຍບຸນທັມຂອງພໍ່
ຖຸນອມ ໂຊກນອ້ຽ ພໍ່ຖຸນອມ ໂຊກນອ້ຽ ຄືລູງບຸນສວນ ກຽຕ ໂງ້ງນາມປາກກາຂອງ

ເພິ່ນ ທ່ານຍາພໍ່ຄຳກິ່ງ ກຽຕ ໂວ້ງ-ນາມປາກກາຂອງພໍ່ປີສລາດໃຫ່ຽໝໍລຳອີ່ສານ ທ່ານອຸ່ນ ຊະນະນິກອຣ ທ່ານຕາແສງອາ່ງ ທ່ານຕາແສງທອຣ ສີຫາຣາຊ ທ່ານ ຄຳມະນີ ຄົນຈົນ ທ່ານຍາພໍ່ເພັຽ ຄຳສິງ ດວງປັນຍາພນະທ່ານເຈົ້ານິດໜໍ່ຄຳ ພນະ ທ່ານກຸ ວໍຣະວົງແລະຜູ້ອື່ນໆ ໄດ້ປະຊຸມໃຫ່ຽກັນເພື່ອຕໍ່ຕ້ານພັຄຄອມມຸນິສອິນດູຈີນ ໃນທ້າຍປີ-1950-ຍອ້ນວາ່ເພາວພວມຂົນຂວຽເອົາຄົນລາວໄປເປັນທາດຮັບໃຊ້ ຢາ່ງບໍ່ມີກາງເວັນຢາ່ງບໍ່ມີກາງຄືນສວ່ນພໍ່ຖຸນອມເພ່ນເປັນຄນະກັມການຖາວອນ ຂອງລາວເສຣີຊົນຜູ້ນຶ່ງເພື່ອຕໍ່ຕ້ານລັດທິຄອມມຸນິສໃນລາວ  ພໍ່ລູງບຸນສວນກຽຕ ໂວ້ງ ບໍ່ແມ່ນຄົນທັມມະດາສາມັນ ຄືທີ່ພວກເຮົາຄຶດເພາະວາ່ທ່ານເອງເປັນຄົນ ທີ່ມີຄວາມປີຊາສາມາດ ໂດຍແທ້ ກໍ່ຄືມີສະຕິຊາຕສູງແລະມີຄວາມສຳນານ ໃນດ້ານ ການຣົບທຸກໆດ້ານ ທ່ານເອງເປັນນັກຍຸທສາດທີ່ຄຣ່ມຄົມ ຈົ່ງວາ່ເພີ່ນເປັນຄົນປິດລັບ ໄດ້ດີແລະສັດຕຣູຈົ່ງວາ່ບໍ່ຮູ້ທ່ານບຸນສວນເຄື່ອນໄຫວ ທ່ານຍາພໍ່ລູງບຸນສວນໄດ້ ສັ່ງສອນຄະນະລາວເສຣີຊົນໄວ້ວາ່ ຊາຕຕອ້ງເປັນໃຫ່ຽແຕ່ຄວາມລັບບໍ່ໃຫ້ຄົນພາຽ ນອກຮູ້ເດັດຂາດນອກຈາກຄົນພາຽໃນການຈັດຕັ້ງແລະວິທີການຕໍ່ສັດຕຣູຢູ່ໄກແລະ ຢູ່ໃກ້ ພໍ່ຖຸນອມ ໂຊກນອ້ຽ ໄດ້ມີຄວາມຮູ້ໃນດ້ານນີ້ເປັນກໍຣະນີພິເສດ ຖາ້ບໍ່ດັ່ງນັ້ນ ທ່ານກາສິງ ໂຕແລະກຳລັງພົນຂອງເພີ່ນໄດ້ເອົາຕົວໄປບໍ່ລອດຖາ້ບໍ່ໄດ້ອາໃສການ ແນະນຳຈາກທ່ານບຸນສວນຍາພໍ່ລູງວິຣະຊົນບຸນສວນ ກຽຕ ໂວ້ງ ໄດ້ເຮັດວຽກກອບ ກູ້ອິສຣະພາບລາວດວ້ຍຄວາມພໍໃຈແລະດວ້ຍຄວາມອາສາສມັຄ ລູງບຸນສວນເຮັດ ວຽກກູ້ຊາຕໄດ້ເລີ້ມແຕ່ອາຍຸຂອງເພີ່ນໄດ້-15-ປີຈົ່ນວາ່ຮອດນາທີສຸດທ້າຍຂອງ ເພີ່ນ ແລະເພີ່ນບໍ່ເຄີຍຈັກເທື່ອວາ່ທວງເອົາໜີ້ບຸນຄຸນຈາກລາວເສຣີຊົນແລະຈາກ ປະເທດຊາຕລາວຂອງຕົນ ທ່ານຍາພໍ່ລູງວິຣະຊົນບຸນສວນ ໄດ້ສອນລູກຫຼານລາວ ເສຣີຊົນໄວ້ວາ່ (ຖາ້ເຮົາມຸດນໍ້າຢາ່ເຮັດຫລັງຟູແບບນົກເປັດ ແລະຖາ້ເຮັດວຽກກູ້ ຊາຕຕອ້ງຮູ້ປິດລັບ ໃຫ້ຄຳນັບແນວຄຶດຂອງພັຄການເມືອງລາວ-ລາວເສຣີຊົນແລະ ລາວອິສຣະ ພວກເຮົາຕອ້ງຮູ້ອັດທວນທັງເກົ້າ ແລະເວົ້າຫຍັງກໍ່ຕອ້ງເວົ້າເອົາປຽບ ຊາຕລາວໄວ້-ສວນໄທ ເພາວເຈັກຈີນຫີນທີ່ ພະມ້າແລະຂແມນບໍ່ແມ່ນອີ່ພີ່ອີ່ນອ້ງ ຂອງຄົນລາວ ໂດຍແທ້ເພາະວາ່ໃນປີ-1975-ພວກເຮົາໄດ້ໜີຈາກແຜ່ນດິນຊາຕ

ເກີດຂອງ ຕົນມານັ້ນ ບໍ່ມີປະເທດໄດເອີ້ນວ່າເປັນຍາດພີ່ນ້ອງຈັກຄວາມເລີຍມີ
ແຕ່ພວກ ເຂົາເຈົ້າຫວັງຈະຂ້າຄົນລາວໃຫ້ດັບໄປ ເພາະສະນັ້ນບໍ່ຕ້ອງໄປເຊື່ອ
ພວກທີ່ບໍ່ມີສິນທັມແລະບໍ່ມີຈິດໃຈໃນຣະບອບປະຊາທິປະໄຕອັນແທ້ຈິງເຖິງທີ່ພວກ
ເຂົາຈະເວົ້າຫວານຫຼາຍກໍ່ຕາມ ວຽກກູ້ຊາຕລາວນີ້ ແມ່ນວຽກຄໍຂາດບາດຕາຍ ສະ
ນັ້ນຕ້ອງສະຫຼາຽຊື່ໃຫ້ເປັນ ສະຫຼາຽສຽງໃຫ້ໄດ້ ສະຫຼາຽພຍາໃຫ້ຖືກ ສະຫຼາຽກໍາລັງ
ໃຫ້ເຫດເມາະກັບສະພາບການແລະຢ່າເຮັດແບບນົກແຕນແອນແຊ່ວນ້ຳ ເພາະວ່າ
ມັນເຈີດພຸ້ນເຈີດພີ້ຊີ່ບິນໄປເຂົ້າປາກໂຕເຫຼືອບີ້ແລະໃນການເຮັດວຽກກູ້ຊາຕນີ້ບໍ່
ແມ່ນມັນຊິແລ້ວມື້ນີ້ມື້ອື່ນສ່ວນເສັຽຊາຕບ້ານເມືອງນັ້ນແມ່ນງ່າຍ ແຕ່ວ່າກູ້ຊາຕ
ບ້ານເມືອງແມ່ນຍາກສະນັ້ນລູກຫຼານແລະທຸກໆທ່ານຜູ້ເຂົ້າໃຈການເມືອງບໍ່ຕ້ອງ
ລໍຖ້າແຕ່ທ່ານຜູ້ທີ່ບໍ່ເຂົ້າໃຈການເມືອງ ທ່ານຜູ້ທີ່ມີພະຍາດທາງແນວຄິດທ່ານຜູ້ທີ່ມີ
ພະຍາດຜັດວັນປະກັນມື້ ທ່ານຜູ້ທີ່ມີພະຍາດຈົກຮູເຮັດແຂນສັ້ນທ່ານຜູ້ທີ່ມີພະຍາດ
ມີຄວາມຮູ້ແຕ່ບໍ່ອອກໃຊ້ແລະທ່ານຜູ້ທີ່ມີພະຍາດຫຍໍ້ທໍ້ຍັບຄໍາເວົ້າບຮັດພຸ້ນບຮັດພີ້
ທ່ານຜູ້ທີ່ເຂົ້າໃຈການເມືອງຕ້ອງພະຍາຍາມເຮັດການເມືອງຕໍ່ໄປ ແລະບໍ່ຕ້ອງລໍ
ຄອຍຖ້າຜູ້ນັ້ນຜູ້ນີ້ຊິມາຊ່ອຍ ໃຫ້ມີແຕ່ຄວາມຕັ້ງໃຈຂອງທ່ານທໍ່ນັ້ນຊິຊ່ອຍທ່ານກູ້
ຊາຕລາວໄດ້ ນອກຈາກນີ້ໄປແລ້ວແມ່ນວ່າອາຈຍາກ ເພາະບໍ່ມີຄວາມສາມັຄຄີ
ນໍາຄົນເວົ້າບໍ່ເຮັດກໍ່ບໍ່ແຕກຕ່າງຫຍັງກັບ ໂຕແມວບໍ່ກິນໝູແລະນາຍຄຣູບໍ່ມີໂຮງ
ຮຽນສອນເຫຼກນ້ອຍ ທ່ານຜູ້ອ່ານຄວນຕິດຕາມອ່ານປຶ້ມຕ່າງໆ ກ່ຽວກັບລາວທີ່
ຂຽນຂຶ້ນ ໂດຍທ່ານສໍ ເສຣີ ເພາະວ່າພໍ່ຂອງຖນອມ ໂຊກນ້ອຽໄດ້ປຶ້ມແມ່ແບບ
ປະວັຕສາດລາວທັງໝົດມີ-21-ຫົວແລະປຶ້ມທີ່ຂຽນ ໂດຍຍາພໍ່ລູງບຸນສອນກຽຕ
ໂວ້ງເອງມີ-5-ຫົວກ່ຽວກັບເມືອງລາວໃຫ້ທ່ານສໍ ເສຣີ ເອົາໄປສານຕໍ່-ທ່ານ
ຖນອມ ໂຊກນ້ອຽ(ສຣີອະນຸໂຊກ)ແລະບິດາແມ່ນກົງກັນຂ້າມເພາະວ່າຖນອມ
ເປັນຍອດນັກມະຫາທໍຣະພີຂອງລາວໃນສັຕວັຕທີ-21-ພໍ່ຂອງຖນອມຊ້ຳພັດຍອດ
ວິຣະບູຣຸສ ແລະເປັນຍອດວິຣະຊົນຂອງລາວເສຣີຊົນ-ລາວຣ່ວມເສຣີພາບແລະ
ລາວອິສຣະ-ໃນສັຕວັຕທີ-20-ຖນອມ ໂຊກນ້ອຽ ບໍ່ໄດ້ພໍ່ຂອງຕົນແມ່ນແຕ່ເປີ
ເຊັ້ນດຽວ ເພາະວ່າຖນອມໄດ້ຊ່ອຍສັດຕຣູ ຂ້າຂບວນການກອບກູ້ອິສຣະພາບ

ລາວຢ່າງບໍ່ມີໜ້າອາຍເເມ່ນເເຕ່ໜ້ອຍດຽວເລີຍ ທໍຣະພີຄົນນີ້ມັນທໍຣະຍົດຊາດເກີດ ຄົນຜູ້ນີ້ສຸດເເລ້ວເເຕ່ທ່ານຜູ້ອ່ານຈະຄຶດເອີ້ນວ່າຢ່າງໄດເເຕ່ວ່າບິດາຂອງຖຸນອມ ເປັນຄົນໃຈຂາວສະອາດເເລະເພິ່ນຮັບໃຊ້ຊາຕລາວ ໂດຍເເທ້ມີຄົນລາວທີ່ບໍຣິສຸດ ບໍ່ຕ່ຳກວ່າ-200-ຄົນໄດ້ເສັຽຊີວິດຍອ້ນນ້ຳມືຂອງຖຸນອມ ໂຊກນອ້ຽເເລະຄະນະ ພັຄພວກຂອງເຂົາຖຸນອມ ໂຊກນອ້ຽ ບໍ່ຊາບວ່າສະຫາຍອ້າງຮູ້ອ້າງດີອ້າງຫລັກ ຫຍັງບໍ່ຈັກໜ້າເຂົ້າກໍ່ໄປຈັບມືຖືເເຂນກັບຄຳໄສ ໄຊຍະສານ -ເສພູທອນ ລູກຊາຍ ຂອງອີ່ນາຍກາເທພ ພັລະເມັຽເກົ່າຂອງອີ່ຕາໂກໂລເເມລຈິຕເເລະຄະນະພັຄພວກ ເພື່ອລອກເອົາພີ່ນ້ອງລາວຈາກອາເມຣິກາຈຳນວນຫຼາຽພໍສົມຄວນເເລະຄົນລາວໃນ ຕາມສູນອົພຍົບຕ່າງໆ (ກ່ອນປີ-1995-ໄປໃຫ້ພວກປະຕິການພັຄຣັຖເເລະຍຸທການ ໄທຍ໌ ເອົາໄປຂ້າເເບບໝູເເບບໝາສ່ວນຄົນລາວຜູ່ທີ່ຖືກຂ້າຕາຍຍອ້ນເເຜນການສົກ ປົກຂອງນັກທໍຣະພີຖຸນອມ ກັບຄຳໄສ ເສພູທອນອີ່ນາຍກາເທພເເມ່ເສພູທອນເເລະ ຄະນະ ເເມ່ນລວ້ນເເຕ່ຄົນບໍຣິສຸດເເລະຄົນຮັກຊາຕ ໂດຽເເທ້-ຄວາມຮັກຊາຕລາວ ຂອງພວກເຂົາບໍ່ໄດ້ໜັກກະບານຫົວຖຸນອມ ໂຊກນອ້ຽເເມ່ນເເຕ່ໜ້ອຍດຽວເເລະເປັນ ຫຍັງໝໍຖຸນອມຈິ່ງໄດ້ມີເເນວຄຶດໄປຈົ່ງໄລໄຟໃໝ້ ຕໍ່ພວກເຂົາເຈົ້າເເບບໃຈດຳອັມ ມະຫິດ ໂດຍທີ່ວ່າ ບໍ່ຄຳນຶງເຖິງວ່າເຂົາເຈົ້າກໍ່ເປັນຍາດຕິພີ່ນ້ອງຂອງລາວເຮົາ ດວ້ຽກັນ ຕ່າງເເຕ່ວ່າຄົນຣະພໍ່ເເມ່ທໍ່ນັ້ນ -ລາວຂ້າລາວ-ບໍ່ສົມຄວນ ເພາະວ່າ ຊາວຕ່າງຊາຕເຂົາຫົວຂວັນ ສ່ວນມາກເເມ່ນເເກວຍີ້ມຢູ່ ທໍຣະພີຖຸນອມ ໂຊກນອ້ຽ ໄດ້ປະກາດທົ່ວສັງຄົມລາວວ່າ ເພີ່ນເປັນສາສດາຈານສອນການເມືອງເເຕ່ວ່າອ່ານ ການເມືອງຂີ້ກາກໆຂອງອີ່ຕາໝູຮັກ ພູມສວັນບໍ່ອອກ ພັນເອກໂອຕະມະເເລະພັນເອກ ຈິຕຜູ້ທີ່ໄດ້ກຳການບິນທະຫານອາກາສໃນຣະບອບເກົ່ານັ້ນ ເເມ່ນໝາກຫົວໃຈຂອງ ສະຫາຽໝູຮັກ ພູມສວັນ ສ່ວນພັນເອກໂອຕະມະ ພັນເອກຈິຕກໍ່ໄດ້ເປັນໄສ້ເສີກຢູ່ ພາຽໃນ ໃຫ້ໝູຮັກໃຫ້ໄກສອນ-ເເຕ່ໝູຮັກ-ໄກສອນ-ຂ້າບໍ່ໄດ້ ໂກໂລເເມນ ໂອຕະມະ ເເລະ ໂກໂລເເມລຈິຕ ເພາະວ່ານາຍພັນທໍຣະພີຈຳສອນສອງຄົນນີ້ ໄດ້ສ້າງຜົນ ງານຢ່າງມະຫາສານໃຫ້ພັຄປະຊາຊົນປະຕິວັຕລາວ ນັບຕັ້ງເເຕ່ປີ-1975-ໃນປີ 1998-ອີ່ຕາພັນເອກໂອຕະມະ ໄດ້ເສີມສ້າງທະຫານອາ ກາດເເລະສ່ວນວິທີ

ອັບຍົບຕ່າງໆ ໃຫ້ທະຫານແນວລາວຢູ່ພາຍໃຕ້ໜູຮັກ ໄກສອນ-ໜູຮັກ ໄກສອນໄດ້
ສົ່ງພັນເອກຈິຕມາເມືອງໄທຍ໌ ເພື່ອເປັນແນວນອງໃຫ້ພັຄຣັຖ ໂກໂລເນນຈິຕແລະ
ບັກເສພູທອນ ລູກຊາຍຂອງມັນຢູ່ເມືອງໄທຍ໌ຈົນຮອດທຸກວັນນີ້ ແຕ່ວ່າທອງຣິທ
ວັງປາວແລະພັນເອກບຸນເລີດໄຊ ໂກສີ ແລະຜູ້ອື່ນໆຢູ່ປະເທດໄທຍ໌ ບໍ່ໄດ້ເກມການ
ເມືອງຂີ້ກາກໆທີ່ນີ້ ໄຜຊິ່ອ່ານບໍ່ອອກແຕ່ວ່າໝໍສາສດາຈາຣທໍຣະພິຖຸນອມ ໂຊກ
ນອ້ຽອ່ານເກມການເມືອງສາຍໜູຮັກ-ໄກສອຣ-ໂອຕະມະ-ຈິຕ-ອີ່ກາເທພ-ເສພູ
ທອນ-ຄໍາໄສບໍ່ບອກສ່ວນຖຸນອມໄດ້ໄປຮຽນຣັຖສາສຈົບມາຈາກສະຖາບັນໄດ
ຈຶ່ງບໍ່ສາມາດເຂົ້າໃຈເຣື້ອງນີ້ ແຕ່ວ່າຄົນລາວທັມດາສາມັນຜູ້ທີ່ບໍ່ໄດ້ຜ່ານ ໂຮງ
ຮ່ຳໂຮງຮຽນຍັງເຂົ້າໃຈກ່ຽວກັບການເມືອງນີ້ ຖຸນອມຄັນບໍ່ຮູ້ການເມືອງແທ້ໆແລ້ວ
ໃຫ້ໄປຖາມແດ່ນາຍພົລທອງຣິທ ນາຍພົລວັງປາວ ໃນເວລາພວກເພິ່ນຍັງບໍ່ທັນໄດ້
ຕາຍນີ້ ແຕ່ຍັງມີຄົນລາວໄປຈາກອາເມຣິກາຈໍານວນໜຶ່ງທີ່ຕົກຄ້າງຢູ່ເມືອງໄທຍ໌ ທີ່
ກັບຄືນອາເມຣິກາບໍ່ໄດ້ເພາະວ່າບັຕຂຽວຂອງເຂົາເຈົ້າໄດ້ຖືກກັກແລະໄດ້ຖືກຍຶດ
ເອົາໂດຽບັກເສພູທອນ ແລະຄໍາໄສ-ເປັນຫຍັງຫ້າວຖຸນອມ ໂຊກນອ້ຽຈຶ່ງບໍ່ໄປຊ່ອຍ
ເຂົາເຈົ້າໄດ້ກັບໄປອາເມຣິກາແດ່ຖ້າວ່າຖຸນອມເປັນຄົນຮັກຊາຕລາວແທ້ແຕ່ວ່າ
ຖຸນອມຊໍ້າພັດໄດ້ໄປຊ່ອຍບັກເສພູທອຣຄໍາໄສ ຊໍ້າໄປຂ້າພວກເຂົາເຈົ້າໃຫ້ສັດຕຣູ
ອີກຊໍ້າໂດຽທີ່ວ່າສັດຕຣູບໍ່ໄດ້ຂໍຮ້ອງ ແຕ່ຖຸນອມຜູ້ທີ່ຂ້າຄົນລາວຊ່ອຍສັດຕຣູ ຊໍ້າ
ພັດວ່າເພິ່ນເປັນຄົນຮັກຊາຕ ສ່ວນບິດາຂອງຖຸນອມ ໂຊກນອ້ຽ ເພິ່ນເຄີຍໄດ້ຕໍ່ສູ້
ຢ່າງໄວ້ລາຍຕາຍຢ່າງໄວ້ກຽດ ຄົນລາວສອງຝັ່ງຂອງນັບຖືໜ້ານັບຖືຕາແລະຮູ້
ບຸນຄຸນຄວາມງາມຄວາມດີຂອງບິດາຂອງພໍ່ຖຸນອມ ສ່ວນຄົນກອງນາງ-ຄົນໜອງ
ຄາຍ-ຄົນສີຊຽງໃໝ່ແລະເລາະໆໄປຮູ້ດີຜົນງານອັນຈົມງາມຂອງລູງບຸນສວນກຽຕ
ໂວ້ງແຕ່ວ່າຖຸນອມບໍ່ຮູ້ຈັກທີ່ໄປທີ່ມາຂອງບິດາມັນອີກ ມັນກໍ່ເລີຍເປັນພະຍານານ
ທໍຣະພິຕາມເຄີຍ ລູງບຸນສວນ ມີລູກຊາຍທີ່ມີຊື່ຖຸນອມ ຊໍ້າພັດເປັນລູກຊາຍອັບປີ
ແລະເປັນຄົນຕາບອດມືດພວກເຮົາບໍ່ຮູ້ສາຽເຫດເລີຍວ່າເປັນຫຍັງ ທໍຣະພິຖຸນອມ
ໂຊກນອ້ຽ ຈຶ່ງໄດ້ຂຽນບົດຍາວຢຽດມາໂຈມຕີກາຣຈັດຕັ້ງຂອງ ພໍ່ມັນເອງ ພວກ
ເຮົາໄດ້ຄັດຈາກສໍາເນົາເດີມມາພອ້ມນີ້ ໂດຽທີ່ວ່າພວກເຮົາບໍ່ໄດ້ປ່ຽນແປງຂໍ້ຄວາມ

ຄຳເວົ້າແຕ່ປາງໃດເລີຍ ທ່ານຜູ້ອ່ານທີ່ຮັກຊາດທັງຫຼາຍ ຄວນອ່ານແລະວິໃຈເບິ່ງ ເອົາຫລັກການຕົວຈິງ ຂອງທໍຣະພີບັກນີ້ ແຕ່ວ່າບໍ່ໄດ້ເພາະພໍ່ຂອງມັນຄືນັກທໍຣະພີລາວ ບັກອື່ນໆ ແຕ່ມັນຂຽນປະຈານຜົລງານຂອງພໍ່ມັນເອງ ຄົນສ່ວນຫຼາຍຮູ້ທີ່ໄປທີ່ມາຂອງ ບິດາຕົນເອງ ແຕ່ຖຸນອມບໍ່ຮູ້ຈັກທີບທຍັງເລີຍ ກໍ່ເລີຍໄດ້ກາຍເປັນນັກປັ້ນຍາຊົນແລະ ຜູ້ຈົບປັນຍາ ຖຸນອມເປັນບັກນົກພັນຄອນ ແລະເປັນສາສດາຈານຕາບອດມືດເພາະ ວ່າຖຸນອມໄດ້ຫລົງຄຳໂຄສະນາການເມືອງຂອງສະຫາຍຈະເຣີນ ພວງພັນ ສະຫາຍ ພູມີວົງວິຈິຕ ສຸພານຸວົງແລະຄະນະພັກພວກ ຈິ່ງວ່າຫລົງທິດຫລົງທາງ ຖຸນອມຂຶ້ນສີ່ ຕີນແລະມາໂຈມຕີເຈົ້ານາຍຝ່າຍຂວາ ວ່າເຈົ້ານາຍຝ່າຍຂວາກິນບ້ານກິນເມືອງ- ອັນນີ້ຈະຕອບວ່າ-ມັນບໍ່ແມ່ນຄວາມຈິງເພາະມັນເປັນຄຳໂຄສະນາຂີ້ຕົວະຫລອກ ລວງ ຂອງນັກການເມືອງປະຕິການຊ້າຍຈັດຜູ້ທີ່ໄດ້ຫາເຣື້ອງຫາຣາວໃສ່ນັກການ ເມືອງຝ່າຍຂວາ-ຝ່າຍກາງ-ທໍຣະພີຖຸນອມຜູ້ທີ່ຢູ່ກະໂຕປະເທສຝຣັ່ງ ບໍ່ໄດ້ມືນຕາ ເບິ່ງແດ່ບໍ໋ຫຼືວ່າຕາແຕກບໍ ຈຶ່ງບໍ່ເບິ່ງເຮືອນພະນະທ່ານອຸ່ນ ຊະນະນິກອຣ-ແລະ ເຈົ້ານາຍເກົ່າຫລາຍໆທ່ານເພິ່ນຢູ່ກັນແບບໃດໃນຝຣັ່ງ ບ້ານທ່ານຢູ່ໂລອິນຄຳແລະ ຢູ່ອາພາດແມ່ນຊ້ຳບໍ່ມີຈັກທ່ານໄດ້ຢູ່ເຮືອນຕຶກໃຫ່ຽໆເປັນຂອງສ່ວນຕົວ ມີເຈົ້າທ່ານ ໃດທີ່ຖຸນອມເຫັນ ໃຫ້ບອກຊື່ແລະນາມສະກຸລໄປໃຫ້ພວກເຮົາຊາບແດ່-ສ່ວນຖຸນອມ ເຮັດແນວໃດຈຶ່ງສາມາຖອ້າປາກຕາກເດືອກໂຄສະນາໂລໆເລໆວ່າ ເຈົ້ານາຍເກົ່າ ກິນບ້ານກິນເມືອງ ພວກປະຕິການຊ້າຍຈັດໄດ້ຍົວະໃຫ້ເວົ້າແນວໃດມຶງກໍ່ຊິໄປເວົ້າ ນຳຫລັງພວກມັນຊຸ່ັນຫວະ ທໍຣະພີຖຸນອມຈິ່ງເປັນຮອດອີ່ພໍ່ຄົນແລ້ວຍັງບໍ່ຄຶດເຖິງ ແມ່ບໍວ່າຈະເວົ້າຫຍັງໄປນັ້ນ ມັນກໍ່ເວົ້າຄົນລາວເໝືອນກັນ ພັນເອກຄຳແທ່ນຈິນຍະ ວົງ ໄດ້ມາຕົກອາເມຣິກາແລະໄດ້ທຳງານມື້ໜຶ່ງໆເຖິງແປດຊົ່ວໂມງ ຄືກັນກັບຄົນ ອາເມຣິກາທົ່ວໆໄປເພື່ອລຽ້ງອາຊີບຄອບຄົວຂອງເພິ່ນ ແລະເພິ່ນກໍ່ທອ້ນເງິນຊື້ ເຮືອນຊື້ຊານຢູ່ຕາມສັງຄົມອາເມຣິກາ ດຽວນີ້ເພິ່ນກໍ່ກິນເງິນອັດຕາເບັ້ຽບຳນານ ຂອງເພິ່ນ ຖຸນອມເອີຍໃຫ້ຈື່ຄຳສຸພາສິຕລາວສອນໄວ້ວ່າ ເຫັນເພິ່ນເວົ້າຢ່າຊິເວົ້າ ນຳເພິ່ນ ສິບປາກເວົ້າມັນບໍ່ທໍ່ຕາເຫັນອັນນີ້ແມ່ນສຸພາສິຕລາວເຮົາເພິ່ນໄດ້ສອນໄວ້ ແລ້ວເດ ອີກບໍ່ພໍທີ່ໃດປີດອກຖຸນອມ ໂຊກນອ້ຽນັກທໍຣະພີໃຫ່ຽສອງຝັ່ງຂອງ ຂອງ

*ລາວ ກໍ່ຈະຍ່າງເຂົ້າຮອດ60-ປີແລ້ວອີກບໍ່ດົນຜີປ້າແຮ່ວກໍ່ຈະສຳພາສຖຸນອມ ເພື່ອໃຫ້ຖຸນອມກັບຄືນໄປຕັ້ງຖິ່ນຖານໃໝ່ຢູ່ເມືອງໄກ່ບໍ່ຂັນ ຖຸນອມໃຫ່ຽປ່ານນີ້ຍັງບໍ່ຈັກຟ້າຈັກໄຟບໍ່ຈັກໄມ້ດິບ ບໍ່ຈັກໄມ້ຕາຍແລະບໍ່ຮູ່ທິບຫຍັງເລີຍ ຍັງຕັ້ງອົກຕັ້ງໃຈໂຄສະນາຂອ່ຍພັຄປະຊາຊົນປະຕິວັຕລາວ ໂດຍທີ່ວ່າພັກຮັຖບໍ່ໄດ້ເສັຽເງີນພໍກິບໃຫ້ ອັນນີ້ຫລະ ໂຕເອງຕິງູໃຫ້ກາແຫ້ງຊ້ຳພັດໄປຕູ່ໃສ່ຜູ້ອື່ນວ່າຜູ້ອື່ນຕິງູໃຫ້ກາກິນ ໂຕເອງເປັນທໍຣະພີ ຊ້ຳພັດວ່າໂຕເອງເປັນຄົນຮັກຊາຕ-ອັນນີ້ເມ່ນເວົ້າງ່າຍໆແລະຟັງຍາກທີ່ສຸດຖຸນອມແທນທີ່ຈະຕັ້ງໃຈມືນຕາໃຫ້ກວ້າງໆແດ່ເພື່ອຈະໄດ້ເຫັນການເມືອງວຽດ ລາວ-ສະຫາຽຖຸນອມພັດເຈືອກໄປນອນຕາຍຢູ່ໃສສະຫາຽ ຈຶ່ງບໍ່ຮູ້ວ່າ ບັກຈາຣກອງບັກຈາຣບຸນເຫຼືອບັກທີຕລັບ ບັກພາ ວົງໄຊບັກຂຸຄຳທັສບັກໝູຜາດແລະຄະນະພັຄພວກໄດ້ເປັນໃສ້ເສິກໄຕ້ດິນພາຽໃນໃຫ້ແກວ ແມວລາວ ນັກການເມືອງຕ່າງປະເທສຮູ້ຈັກກຽ່ວກັບຄົນລາວຈຳພວກດັ່ງກາວນີ້ດີ ບັດວ່າ ທໍຣະພີຖຸນອມບໍ່ຮູ້ຈັກເລີຍ ແລະບໍ່ຈັກວ່າຖຸນອມເປັນສາສດາຈາຣ ປະເທສໃດກໍ່ບໍ່ຈັກແລະມັນກໍ່ຊິບໍ່ແຕກຕ່າງຫຍັງດອກກັບສາສດາຈາຣ ມະຫາວິທະຍາໄລຣົ່ມສາມສາ ທໍຣະພີໝໍນີ້ຍັງບໍ່ຈັກອີກວ່າປະເທສລາວຝັ່ງວຽງຈັນ ໄດ້ເປັນຊັພສົບບັຕຂອງຣ່າໂນ້ຍແລ້ວ ແລະເມືອງລາວຝັ່ງພາກອີສານໄດ້ເປັນຊັພສົມບັຕຂອງບາງກອກແຕ່ປີ-1828-ຈົ່ນຮອດທຸກວັນນີ້ ຄົນລາວບໍ່ມີຊັພສົມບັຕຫຍັງໝົດ ຍັງມີແຕ່ຕີນທໍ່ນັ້ນໃນປະຈຸບັນນີ້-ນັກການເມືອງລາວຄວນຄິດຄົ້ນຫາເອົາຄວາມຈິງເພື່ອຕໍ່ຕ້ານແກວລາວແດງໃຫ້ຊິ້ນສຸດຫາຽໄປ*

**ຈາກສູນກາງ ສັນພູໝອກ ນະຄອນວຽງຈັນ**

**ໃນນາມພັກປະຊາຊົນລາວອິສຣະ**

**ຄັ້ງວັນທີ-25-5-00**